ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 0345/ກຊສ

ນະຄອນຫລວງວຽງຈັນ, ວັນທີ 22 ມັງກອນ 2015

# ຂໍ້ຕົກລົງ
## ວ່າດ້ວຍລະບຽບການດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ

- ອີງຕາມມາດຕາ 44 ແລະ 45 ຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 435/ນຍ, ລົງວັນທີ 28 ພະຈິກ 2011;
- ອີງຕາມ ໜັງສືສະເໜີຂອງກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ສະບັບເລກທີ 0691/ກຊສ.ກສສ, ລົງວັນທີ 24 ທັນວາ 2014.

**ລັດຖະມົນຕີວ່າການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:**

## ໝວດທີ 1
## ຫຼັກການທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ເງື່ອນໄຂ, ຂັ້ນຕອນ ແລະ ມາດຕະການ ກ່ຽວກັບການດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ເພື່ອຄຸ້ມຄອງ ແລະ ຕິດຕາມກວດກາ ບັນດາວິສາຫະກິດ ທີ່ໃຫ້ບໍ ລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ແນໃສ່ຮັບປະກັນຄຸນນະພາບ ແລະ ສອດຄ່ອງຕາມລະບຽບກົດໝາຍຂອງ ສປປ ລາວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມຍືນຍົງ.

**ມາດຕາ 2 ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ**

ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມປະກອບມີ:

1. ການສຶກສາ, ວິເຄາະ, ປະເມີນຜົນ ແລະ ສ້າງບົດລາຍງານຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ອາດຈະເກີດຂຶ້ນຈາກການຈັດຕັ້ງປະຕິບັດຂອງໂຄງການລົງທຶນ ຫຼື ກິດຈະການພັດທະນາຕ່າງໆ ແລະ ທຸລະກິດຄອບຄົວ ພ້ອມທັງສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
2. ການບໍລິການດ້ານເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ, ອາຄານເຄຫາສະຖານ ເປັນມິດສິ່ງແວດລ້ອມ;
3. ການຄວບຄຸມມົນລະພິດ, ການຄຸ້ມຄອງສິ່ງເສດເຫຼືອ, ສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ເປັນພິດ;
4. ການສຶກສາ ແລະ ສ້າງຈິດສຳນຶກ ເພື່ອສົ່ງເສີມຄຸນນະພາບສິ່ງແວດລ້ອມ;
5. ການບໍລິການກ່ຽວກັບການວາງແຜນການຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ;
6. ການບໍລິການປະເມີນສິ່ງແວດລ້ອມແບບຍຸດທະສາດ;

7. ການບໍລິການຈັດຕັ້ງປະຕິບັດພັນທະໃນແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ;
8. ການບໍລິການຕິດຕາມຄຸນນະພາບສິ່ງແວດລ້ອມ (ອາກາດ, ນ້ຳ, ສຽງ)
9. ການບໍລິການການຄົ້ນຄ້ວາ ແລະ ວິໄຈຄຸນນະພາບສິ່ງແວດລ້ອມ;
10. ວຽກງານອື່ນໆກ່ຽວກັບການບໍລິການວິຊາການດ້ານສິ່ງແວດລ້ອມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ໃບອະນຸຍາດດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ** ໝາຍເຖິງ ໃບຢັ້ງຢືນທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ອອກໃຫ້ແກ່ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ;
2. **ທີ່ປຶກສາດ້ານສິ່ງແວດລ້ອມ** ໝາຍເຖິງ ບຸກຄົນທີ່ມີຄວາມຊ່ຽວຊານສະເພາະດ້ານ ເປັນຕົ້ນ: ດ້ານທີ່ດິນ, ປ່າໄມ້, ນ້ຳ, ທໍລະນີສາດ-ແຮ່ທາດ, ຊີວະນາໆພັນ, ຊົນເຜົ່າ, ວັດທະນະທຳ ແລະ ອື່ນໆ ທີ່ຂຶ້ນທະບຽນເຄື່ອນໄຫວໃນວິສາຫະກິດດ້ານສິ່ງແວດລ້ອມ ຫຼື ສັງກັດຢູ່ສະພາຜູ້ຊ່ຽວຊານດ້ານສິ່ງແວດລ້ອມ;
3. **ຈັນຍາບັນວິຊາການດ້ານສິ່ງແວດລ້ອມ** ໝາຍເຖິງ ຄວາມຮັບຜິດຊອບ, ຄຸນນະທຳ ແລະ ສິນລະທຳຕໍ່ວິຊາຊີບຂອງຕົນໃນການໃຫ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້;
4. **ອຸປະກອນ** ໝາຍເຖິງ ເຄື່ອງມືຮັບໃຊ້ເຂົ້າໃນການເຄື່ອນໄຫວບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມຂອງວິສາຫະກິດ;
5. **ຜູ້ພັດທະນາ** ໝາຍເຖິງ ຜູ້ລົງທຶນຂອງລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດທີ່ນຳສະເໜີໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້;
6. **ຂະແໜງການຂອງລັດ** ໝາຍເຖິງ ຂະແໜງການທີ່ກ່ຽວຂ້ອງ ແລະ ສະພາຜູ້ຊ່ຽວຊານດ້ານສິ່ງແວດລ້ອມມີໜ້າທີ່ຮັບຜິດຊອບໃນການທົບທວນ ແລະ ຮັບຮອງເອົາການດຳເນີນການບໍລິການວິຊາການດ້ານສິ່ງແວດລ້ອມ;
7. **ວິສາຫະກິດ** ໝາຍເຖິງ ບໍລິສັດດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມຂອງບຸກຄົນ ຫຼື ນິຕິບຸກຄົນ.

**ມາດຕາ 4 ຫຼັກການການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ**

ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຕ້ອງປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ຕ້ອງຮັບປະກັນໃຫ້ມີຂໍ້ມູນຄົບຖ້ວນ ແລະ ຖືກຕ້ອງກັບສະພາບຄວາມເປັນຈິງ ຂອງແຕ່ລະພື້ນທີ່ໂຄງການລົງທຶນ ແລະ/ຫຼື ກິດຈະການຕ່າງໆ;
2. ຮັບຜິດຊອບຜົນເສຍຫາຍທີ່ເກີດຂຶ້ນຈາກການດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຕາມລະບຽບກົດໝາຍ;
3. ຮັບປະກັນການມີສ່ວນຮ່ວມຂອງມວນຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມໃນ ສປປ ລາວ.

# ໝວດທີ 2
# ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ

**ມາດຕາ 6 ເງື່ອນໄຂຜູ້ໃຫ້ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດ ດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຕ້ອງມີເງື່ອນໄຂດັ່ງນີ້:

1. ມີໃບທະບຽນວິສາຫະກິດ, ບົດວິພາກເສດຖະກິດ-ເຕັກນິກ, ສອດຄ່ອງກັບກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍ ວ່າດ້ວຍ ວິສາຫະກິດ;
2. ມີຖານະທາງດ້ານການເງິນ ສຳລັບເຄື່ອນໄຫວບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຢ່າງໜ້ອຍ ສີ່ຮ້ອຍລ້ານ ກີບ ໂດຍມີການຢັ້ງຢືນຈາກທະນາຄານທີ່ເຄື່ອນໄຫວຖືກຕ້ອງ ຕາມກົດໝາຍຂອງ ສປປ ລາວ. ສະເພາະການບໍລິການດ້ານອື່ນ ທີ່ບໍ່ແມ່ນການສຶກສາ, ວິເຄາະ, ປະເມີນຜົນ ແລະ ສ້າງບົດລາຍງານຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຕ້ອງມີຖານະດ້ານການເງິນ ຢ່າງໜ້ອຍ ໜຶ່ງຮ້ອຍລ້ານ ກີບ ຂຶ້ນໄປ;
3. ມີຊ່ຽວຊານທີ່ໃຫ້ການບໍລິການສະເພາະດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳການຢູ່ວິສາຫະກິດ ຢ່າງໜ້ອຍ ສາມຄົນ ຂຶ້ນໄປ ທີ່ມີວິຊາສະເພາະທີ່ກ່ຽວຂ້ອງ ໂດຍບໍ່ໄດ້ສັງກັດຢູ່ວິສາຫະກິດອື່ນ;
4. ໃນກໍລະນີໃຫ້ບໍລິການກ່ຽວກັບດ້ານການສຶກສາ, ວິເຄາະ, ປະເມີນຜົນ ແລະ ສ້າງບົດລາຍງານຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຕ້ອງມີຊ່ຽວຊານ ທີ່ໃຫ້ການບໍລິການສະເພາະດ້ານຢູ່ວິສາຫະກິດ ຢ່າງໜ້ອຍ ຫ້າຄົນ ຂຶ້ນໄປ ໃນຂົງເຂດຕົ້ນຕໍ ເຊັ່ນ: ດ້ານປ່າໄມ້, ອຸທົກກະສາດ, ທໍລະນີສາດ-ແຮ່ທາດ, ຊີວະນາໆພັນ, ສັງຄົມ ແລະ ອື່ນໆ ໂດຍບໍ່ໄດ້ສັງກັດຢູ່ວິສາຫະກິດອື່ນ;
5. ມີອຸປະກອນຫ້ອງການ ແລະ ເຄື່ອງມືຮັບໃຊ້ວິຊາສະເພາະ ຢ່າງພຽງພໍ ຕາມທີ່ກຳນົດໄວ້ໃນແບບພິມ;
6. ມີຜົນງານໃນການປະກອບສ່ວນໃນກິດຈະກຳຕ່າງໆ ກ່ຽວກັບ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 7 ມາດຕະຖານ ຂອງຊ່ຽວຊານສະເພາະດ້ານ**

ຊ່ຽວຊານສະເພາະດ້ານ ທີ່ຈະບັນຈຸເຂົ້າໃນວິສາຫະກິດ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີວຸດທິການສຶກສາລະດັບ ປະລິນຍາໂທ ຂຶ້ນໄປ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທີ່ກຳນົດໄວ້ໃນຂໍ້ 3 ແລະ 4 ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;
2. ສຳລັບວຸດທິການສຶກສາ ຊັ້ນສູງ ຂຶ້ນໄປ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຕ່ຕ້ອງມີປະສົບການຢ່າງໜ້ອຍ ສາມ ປີ. ສຳລັບຜູ້ມີວຸດທິການສຶກສາຕ່ຳກ່ວາຊັ້ນສູງ ແຕ່ມີປະສົບການໃນການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຢ່າງໜ້ອຍ ຫ້າ ປີຂຶ້ນໄປ;
3. ບໍ່ແມ່ນພະນັກງານສັງກັດລັດ;
4. ບໍ່ເຄີຍຕ້ອງໂທດທີ່ກ່ຽວຂ້ອງກັບຄະດີ ທີ່ພົວພັນກັບການສ້າງຄວາມເສຍຫາຍ ຫຼື ຜົນກະທົບຕໍ່ສິ່ງແວດລ້ອມ.

**ມາດຕາ 8 ສະພາຜູ້ຊ່ຽວຊານດ້ານສິ່ງແວດລ້ອມ**

ສະພາຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ມີໜ້າທີ່ບໍລິການໃຫ້ຄຳປຶກສາຫາລືກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະວຽກງານບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມດັ່ງທີ່ລະບຸໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້.

ພາລະບົດບາດຂອງສະພາຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ໃຫ້ປະຕິບັດຕາມລະບຽບການສະເພາະ.

# ໝວດທີ 3
# ຂັ້ນຕອນການພິຈາລະນາ ແລະ ອອກໃບອະນຸຍາດ

**ມາດຕາ 9 ຂັ້ນຕອນການພິຈາລະນາ**

ການອະນຸຍາດ ປະກອບດ້ວຍຂັ້ນຕອນ ດັ່ງນີ້:

1. ຂັ້ນຕອນຮັບ ແລະ ກວດກາເອກະສານ
2. ຂັ້ນຕອນ ການກວດກາບໍລິສັດ
3. ຂັ້ນຕອນການອະນຸມັດ

**ມາດຕາ 10 ຂັ້ນຕອນ ຮັບ ແລະ ກວດກາເອກະສານ**

ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ຮັບ ແລະ ກວດກາຄວາມຖືກຕ້ອງ ຂອງເອກະສານໃນການຂໍໃບອະນຸຍາດ ດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ, ຖ້າເຫັນວ່າບໍ່ຖືກຕ້ອງ ແມ່ນແຈ້ງໃຫ້ວິສາຫະກິດເພື່ອປັບປຸງເອກະສານຄືນພາຍໃນ ຫ້າ ວັນລັດຖະການ, ຖ້າເຫັນວ່າຖືກຕ້ອງຄົບຖ້ວນແລ້ວ ຜູ້ສະເໜີຕ້ອງປະກອບເອກະສານເພີ່ມຈຳນວນ ຫ້າ ຊຸດ ຕາມແບບພິມທີ່ວາງອອກ. ການພິຈາລະນາດັ່ງກ່າວ ຕ້ອງສຳເລັດພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ມື້ຮັບເອກະສານຄົບຖ້ວນ ໂດຍໃຫ້ປະຕິບັດຕາມຫຼັກການ ແລະ ມາດຕະຖານໃນຂໍ້ຕົກລົງສະບັບນີ້.

ສຳລັບການສະເໜີ ຂໍຕໍ່ໃບອະນຸຍາດ ດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ແມ່ນໃຫ້ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ. ຫຼັງຈາກນັ້ນ ຈຶ່ງສະເໜີໃຫ້ການນຳກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຕົກລົງຕາມລະບຽບການ.

ໃນກໍລະນີໄດ້ແນະນຳໃຫ້ປັບປຸງຄືນແລ້ວ ແຕ່ຜູ້ສະເໜີບໍ່ສາມາດປັບປຸງຄືນ ຫຼື ບໍ່ປະຕິບັດໄດ້ຕາມຄຳແນະນຳເຖິງ ສາມ ຄັ້ງພາຍໃນກຳນົດເວລາ ເກົ້າສິບ ວັນລັດຖະການ ແມ່ນຈະບໍ່ຮັບພິຈາລະນາຄືນ.

**ມາດຕາ 11 ຂັ້ນຕອນ ການກວດກາບໍລິສັດ**

ພາຍຫຼັງຜ່ານຂັ້ນຕອນການພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້, ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ຄົ້ນຄວ້າແຕ່ງຕັ້ງຄະນະກວດກາວິຊາການ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກກົມສົ່ງ ເສີມຄຸນນະພາບສິ່ງແວດລ້ອມ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ພາກສ່ວນທີ່ກ່ຽວຂ້ອງ ພາຍໃນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນ ບ່ອນທີ່ວິສາຫະກິດຕັ້ງຢູ່ເຂົ້າຮ່ວມ.

ການກວດກາວິສາຫະກິດທີ່ສະເໜີສ້າງໃໝ່ ຫຼື ຂໍຕໍ່ໃບອະນຸຍາດຕ້ອງດຳເນີນຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 6 ແລະ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12 ຂັ້ນຕອນ ການອະນຸມັດ**

ພາຍຫຼັງການກວດກາສຳເລັດແລ້ວ ເຫັນວ່າຖືກຕ້ອງກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ພິຈາລະນານຳສະເໜີການນຳກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາອອກໃບອະນຸຍາດຕາມລະບຽບການ.

## ໝວດທີ 4
## ໃບອະນຸຍາດ ດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ

**ມາດຕາ 13 ໃບອະນຸຍາດ ດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ.**

ໃບອະນຸຍາດ ດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ແມ່ນໃບອະນຸຍາດ ທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກໃຫ້ແກ່ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອເຄື່ອນໄຫວບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ.

**ມາດຕາ 14 ການນຳໃຊ້ໃບອະນຸຍາດ**

ວິສາຫະກິດທີ່ໄດ້ຮັບໃບອະນຸຍາດ ຕ້ອງນຳໃຊ້ ແລະ ເຄື່ອນໄຫວ ຕາມເງື່ອນໄຂທີ່ກຳນົດໄວ້ໃນໃບອະນຸຍາດ ຢ່າງເຂັ້ມງວດ.

ໃນກໍລະນີໃບອະນຸຍາດມີການເສຍຫາຍ ດ້ວຍເຫດຜົນໃດໜຶ່ງ ໂດຍມີເອກະສານຢັ້ງຢືນ, ວິສາຫະກິດດັ່ງກ່າວ ສາມາດນຳສະເໜີເພື່ອຂໍນຳໃຊ້ສຳເນົາຂອງໃບອະນຸຍາດດັ່ງກ່າວ.

**ມາດຕາ 15 ອາຍຸຂອງໃບອະນຸຍາດ**

ໃບອະນຸຍາດ ດຳເນີນການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ແມ່ນມີອາຍຸການນຳໃຊ້ ສອງປີ. ກ່ອນໃບອະນຸຍາດໝົດອາຍຸ ພາຍໃນເກົ້າສິບວັນ ວິສາຫະກິດທີ່ມີຈຸດປະສົງສືບຕໍ່ການເຄື່ອນໄຫວ ຕ້ອງນຳສະເໜີຂໍຕໍ່ໃບອະນຸຍາດ ຕາມເງື່ອນໄຂໃນຂໍ້ຕົກລົງສະບັບນີ້.

ໃນກໍລະນີທີ່ວິສາຫະກິດບໍ່ສະເໜີຕໍ່ໃບອະນຸຍາດ ຕາມທີ່ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້, ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ຕ້ອງອອກແຈ້ງການກ່ຽວກັບການຢຸດດຳເນີນບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຕາມລະບຽບການ.

**ມາດຕາ 16 ການໂຈະ, ຖອນ ຫຼື ຍົກເລີກ ໃບອະນຸຍາດ**

ໃນກໍລະນີວິສາຫະກິດບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ ຫຼືມີການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຂາດຈັນຍາບັນ ເປັນສາເຫດພາໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຮ້າຍແຮງ, ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ຄົ້ນຄ້ວານຳສະເໜີການນຳກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສັ່ງໂຈະ, ຖອນ ຫຼື ຍົກເລີກໃບອະນຸຍາດດັ່ງກ່າວ ແລະ ປະຕິບັດມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ.

ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ຕ້ອງອອກແຈ້ງການໃຫ້ຂະແໜງອຸດສາຫະກຳ-ການຄ້າ ກ່ຽວກັບການໂຈະ, ຖອນ ຫຼື ຍົກເລີກ ໃບອະນຸຍາດດັ່ງກ່າວ ຕາມລະບຽບການ.

## ໝວດທີ 5
## ການປ່ຽນແປງ

**ມາດຕາ 17 ການປ່ຽນຊື່ ຫຼື ທີ່ຕັ້ງວິສາຫະກິດ**

ໃນກໍລະນີມີການປ່ຽນຊື່ ຫຼື ທີ່ຕັ້ງວິສາຫະກິດ ຕ້ອງໄດ້ສະເໜີຫາພາກສ່ວນທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງກຳນົດໄວ້.

**ມາດຕາ 18 ການເພີ່ມ ຫຼື ຫຼຸດຂອບເຂດການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ**

ວິສາຫະກິດທີ່ມີຈຸດປະສົງເພີ່ມ ຫຼື ຫຼຸດການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ທີ່ບໍ່ໄດ້ກໍານົດໄວ້ໃນໃບອະນຸຍາດ ຕ້ອງໄດ້ນໍາສະເໜີຫາກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10, 11 ແລະ 12 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 6
## ຄ່າໃຊ້ຈ່າຍ ແລະ ຄ່າບໍລິການ

**ມາດຕາ 19 ຄ່າໃຊ້ຈ່າຍ**

ວິສາຫະກິດ ຕ້ອງຮັບຜິດຊອບທຸກຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຕາມໜ້າວຽກທີ່ກໍານົດໄວ້ໃນມາດຕາ 10, 11 ແລະ 12 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 20 ຄ່າບໍລິການ**

ວິສາຫະກິດ ຕ້ອງເສຍຄ່າບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມຕາມທີ່ໄດ້ກໍານົດໄວ້ໃນລັດຖະບັນຍັດຂອງປະທານປະເທດສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ.

## ໝວດທີ 7
## ການປະເມີນ ແລະ ລາຍງານ

**ມາດຕາ 21 ການປະເມີນ**

ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ມີໜ້າທີ່ປະເມີນການເຄື່ອນໄຫວຂອງວິສາຫະກິດໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ.

**ມາດຕາ 22 ການລາຍງານ**

ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ມີໜ້າທີ່ລາຍງານຜົນຂອງການປະເມີນ ຕໍ່ການນໍາກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

ວິສາຫະກິດມີພັນທະລາຍງານຜົນການເຄື່ອນໄຫວຂອງຕົນທຸກໆ ຫົກເດືອນ ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນປົກກະຕິ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ວິສາຫະກິດໃດ ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍຂອງສປປ ລາວຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ**

ວິສາຫະກິດໃດ ທີ່ລະເມີດລະບຽບກົດໝາຍກ່ຽວກັບສິ່ງແວດລ້ອມ ແລະ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆດ້ວຍການຕັກເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ຮັບຜິດຊອບທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ທີ່ລະບຽບກົດໝາຍກຳນົດໄວ້.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ພາກສ່ວນທີ່ກ່ຽວຂ້ອງພາຍໃນກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ລະບຽບການ ຫຼື ແຈ້ງການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອມແຕ່ຖືກຍົກເລີກ.

**ລັດຖະມົນຕີວ່າການ**
**ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ກະຊວງ ຊັບພະຍາກອນທຳມະຊາດ ແລະ ... ລັດຖະມົນຕີ

ຈູລົນ ສິນບັນດິດ